ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

186

ເລກທີ........../ກອຫ.ມຖ

ນະຄອນຫຼວງວຽງຈັນ, ວັນທີ..22..ກຸມພາ 2018

## ຄຳແນະນຳ

## ກ່ຽວກັບ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ (ສະບັບປັບປຸງ)

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1551/ອຄ, ລົງວັນທີ 31 ສິງຫາ 2016.
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 2035/ຫສນຍ.ກລຂ, ລົງວັນທີ 21 ທັນວາ 2017 ວ່າດ້ວຍການປັບປຸງຂໍ້ຕົກລົງເລກທີ 1833/ອຄ, ວັນທີ 03 ຕຸລາ 2016 ວ່າດ້ວຍລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ.
- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ(ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ (ສະບັບປັບປຸງ) ເລກທີ 0002/ອຄ.ກອຫ, ລົງວັນທີ 03 ມັງກອນ 2018.

ເພື່ອເປັນການປະກອບສ່ວນເຂົ້າໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ແລະ ຂໍ້ຕົກລົງ ຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0002/ອຄ.ກອຫ, ລົງວັນທີ 03 ມັງກອນ 2018 ໃຫ້ໄດ້ຮັບຜົນສຳເລັດ, ປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ໃຫ້ຍືນຍົງພ້ອມທັງສ້າງຄວາມເຂັ້ມແຂງໃຫ້ຂະແໜງອຸດສາຫະກຳປຸງແຕ່ງໄມ້ ໄປຕາມທິດຂອງການພັດທະນາ.

### ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ ອອກຄຳແນະນຳ ດັ່ງນີ້:

ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ປະກອບດ້ວຍ ຊື່ທີ່ລະບຸເປັນພາສາລາວ ແລະ ພາສາອັງກິດ, ເລກລະຫັດສິນຄ້າ (ລະຫັດເກົ່າ ແລະ ລະຫັດຍ່ອຍ), ຮູບແບບ ແລະ ຂະໜາດ ຕາມທີ່ລະບຸໄວ້ໃນ ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0002/ອຄ.ກອຫ, ລົງວັນທີ 03 ມັງກອນ 2018 ດັ່ງນີ້:

- ເອກະສານຊ້ອນທ້າຍ 01: ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ທຳມະຊາດ" ເພື່ອສົ່ງອອກ;
- ເອກະສານຊ້ອນທ້າຍ 02: ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປູກ" ເພື່ອສົ່ງອອກ;
- ເອກະສານຊ້ອນທ້າຍ 03: ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປ່ອງ ແລະ ຫວາຍ" ເພື່ອສົ່ງອອກ.

## I. ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ທຳມະຊາດ" ເພື່ອສົ່ງອອກ.

ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ທຳມະຊາດ" ເພື່ອສົ່ງອອກ ແມ່ນຜະລິດຕະພັນໄມ້ ຕາມການກຳນົດ

ໃນເອກະສານຊ້ອນທ້າຍ 01, ຊຶ່ງປະກອບດ້ວຍ 08 ລາຍການ ຫຼື ປະເພດ, ແຕ່ລະປະເພດປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ, ຊຶ່ງໄດ້ກຳນົດ ຂະໜາດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ຢ່າງຈະແຈ້ງ.

1. **ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ**

ຜະລິດຕະພັນຂີ້ເລື່ອຍປະກອບດ້ວຍ 02 ຊະນິດຄື: ຂີ້ເລື່ອຍອັດແທ່ງ ແລະ ຂີ້ເລື່ອຍອັດເມັດ. ຜະລິດຕະພັນເຫຼົ່ານີ້ໄດ້ມາຈາກ ຂີ້ເລື່ອຍ, ຂີ້ກົບ, ໄມ້ເສດ ແລະ ສິ່ງແຕກຫັກຂອງໄມ້ ຈາກໂຮງງານປຸງແຕ່ງໄມ້ ມາຕິດລວມເຂົ້າກັນດ້ວຍກາວ ອັດເປັນທ່ອນ, ກ້ອນ, ແຜ່ນ ແລະ ອື່ນໆ. ຂີ້ເລື່ອຍ, ຂີ້ກົບ, ໄມ້ເສດ ແລະ ສິ່ງແຕກຫັກຂອງໄມ້ ຕ້ອງມາຈາກໂຮງງານປຸງແຕ່ງໄມ້, ຊຶ່ງບໍ່ອະນຸຍາດໃຫ້ນຳເອົາໄມ້ຈາກປ່າທຳມະຊາດຕ່າງໆ ຫລື ແຫລ່ງອື່ນໆ.

2. **ຜະລິດຕະພັນຖ່ານໄມ້**

ຜະລິດຕະພັນຖ່ານໄມ້ປະກອບດ້ວຍ 02 ຊະນິດ ຄື: ຖ່ານຂາວ ແລະ ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ, ຊຶ່ງມີລາຍລະອຽດ ດັ່ງນີ້:

2.1 **ຖ່ານຂາວ** ແມ່ນຜະລິດຕະພັນຖ່ານ ຈາກໄມ້ຕິ້ວ ທີ່ຂຸດຄົ້ນຈາກສວນປູກ ຫຼື ເຂດປ່າຟື້ນຟູ ທີ່ອະນຸຍາດໃຫ້ຂຸດຄົ້ນຕາມລະບຽບການທີ່ກ່ຽວຂ້ອງ.

2.2 ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ ແມ່ນຜະລິດຕະພັນຖ່ານໄມ້ ທີ່ນຳເອົາຂີ້ເລື່ອຍມາອັດເປັນແທ່ງ ຫຼື ເປັນເມັດແລ້ວເຜົາ ຫຼື ປຸງແຕ່ງເປັນຖ່ານ (ດັ່ງທີ່ລະບຸໄວ້ ໃນຂໍ້ທີ 1 ຂ້າງເທິງນີ້).

3. **ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສຳລັບພາຍໃນ**

ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນສຳລັບພາຍໃນປະກອບດ້ວຍ 04 ຊະນິດ ຄື: **ຜະລິດຕະພັນໄມ້ປັກເກ້; ຜະລິດຕະພັນໄມ້ປູພື້ນ; ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ ແລະ ຜະລິດຕະພັນໄມ້ຕໍ່ເປັນເສັ້ນ**, ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ.

ຜະລິດຕະພັນໄມ້ເຫລົ່ານີ້ ແມ່ນຜະລິດຕະພັນໄມ້ທີ່ມີຂະໜາດອັນສະເພາະ ໂດຍຜ່ານຂະບວນການປຸງແຕ່ງດ້ວຍການອົບ, ຕັດຂະໜາດ, ກົບລຽບສີ່ດ້ານ, ຂັດ, ອັດດ້ວຍກາວເປັນຊັ້ນ, ແລ່ນຫລົ່ມ ແລະ ຮ່ອງ ຫຼື ບໍ່ແລ່ນຫລົ່ມ ແລະ ຮ່ອງ, ລົງສີ ຫຼື ບໍ່ລົງສີ, ມີບາງຮູບແບບກໍ່ຈະໄດ້ແລ່ນຮ່ອງກັນມື່ນ.

3.1 ຜະລິດຕະພັນໄມ້ປັກເກ້ ປະກອບດ້ວຍ 03 ຮູບແບບ ຄື: ໄມ້ປັກເກ້ສິ້ນດຽວ, ໄມ້ປັກເກ້ເຊື່ອມຕໍ່ປະສານ ແລະ ໄມ້ປັກເກ້ໂມເສດ.

3.2 ຜະລິດຕະພັນໄມ້ປູພື້ນ ປະກອບດ້ວຍ 05 ຮູບແບບ ຄື: ໄມ້ປູພື້ນຊິ້ນດຽວ, ໄມ້ປູພື້ນເຊື່ອມຕໍ່ຊິ້ນດຽວ, ໄມ້ປູພື້ນເຊື່ອມຕໍ່ປະສານ, ໄມ້ປູພື້ນອັດເປັນຊັ້ນ ແລະ ໄມ້ແຜ່ນພື້ນເດັກກິ້ງ.

3.3 ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ ປະກອບດ້ວຍ 04 ຮູບແບບ ຄື: ໄມ້ເພດານແບບຮ່ອງຕົວວີ (V), ໄມ້ເພດານແບບເຊື່ອມຕໍ່ປະສານ, ໄມ້ແອ້ມຝາ ຫຼື ເພດານແບບອັດເປັນຊັ້ນ ແລະ ໄມ້ແອ້ມຝາແບບມູນ.

3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ ແມ່ນຜະລິດຕະພັນໄມ້ທີ່ນຳໃຊ້ໄມ້ສັ້ນ, ໄມ້ນ້ອຍມາອັດເຊື່ອຕໍ່ເຂົ້າກັນດ້ວຍກາວເປັນເສັ້ນຍາວ.

- ➢ ຜະລິດຕະພັນບາງຮູບແບບດັ່ງກ່າວມີຄຳອະທິບາຍເພີ່ມເຕີມ ດັ່ງນີ້:

- **ຜະລິດຕະພັນໄມ້ປູພື້ນເຊື່ອມຕໍ່ປະສານ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນດ້ວຍກາວເປັນເສັ້ນຍາວ, ຊຶ່ງມີຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບລຽບສີ່ດ້ານ, ຂັດ, ແລ່ນຫລົ່ມ

ແລະ ຮ່ອງ ຫຼື ບໍ່ແລ່ນຫລົ້ມ ແລະ ຮ່ອງ, ລົງສີ ຫຼື ບໍ່ລົງສີ.

- **ໄມ້ປູພື້ນແບບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ມາຕິດເຂົ້າກັນດ້ວຍກາວເປັນ 2 ຊັ້ນ ຫຼື 3 ຊັ້ນ ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ, ສ່ວນໜ້າດ້ານເທິງ ແມ່ນໃຊ້ໄມ້ທີ່ມີຄຸນນະພາບດີ ແລະ ສວຍງາມ ຕິດໃສ່, ຊຶ່ງຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຊອຍ, ຕັດຂະໜາດ, ປາດເດືອຍ ຫຼື ບໍ່ປາດເດືອຍ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບລຽບສີ່ດ້ານ, ຂັດ, ແລ່ນຫລົ້ມ ແລະ ຮ່ອງ ຫຼື ບໍ່ ແລ່ນຫລົ້ມ ແລະ ຮ່ອງ, ລົງສີ ຫຼື ບໍ່ລົງສີ.
- **ໄມ້ແອ້ມຝາ ແລະ ເພດານ** ແມ່ນຜະລິດຕະພັນໄມ້ທີ່ຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ຊອຍ, ຕັດຂະ ໜາດ, ກົບລຽບສີ່ດ້ານ, ຂັດ, ແລ່ນຫລົ້ມ ແລະ ຮ່ອງ ຫຼື ບໍ່ແລ່ນຫລົ້ມ ແລະ ຮ່ອງ, ລົງສີ ຫຼື ບໍ່ລົງສີ.
- **ຜະລິດຕະພັນໄມ້ຕໍ່ເປັນເສັ້ນ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍ ມາອັດເຊື່ອມຕໍ່ເຂົ້າກັນດ້ວຍກາວເປັນ ເສັ້ນຍາວ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ປາດເດືອຍ, ຕິດກາວເຊື່ອມຕໍ່ ເຂົ້າກັນເປັນເສັ້ນດຽວ, ກົບລຽບສີ່ດ້ານ, ຂັດ, ແລ່ນຫລົ້ມ ແລະ ຮ່ອງ ຫຼື ບໍ່ແລ່ນຫລົ້ມ ແລະ ຮ່ອງ, ລົງ ສີ ຫຼື ບໍ່ລົງສີ.

## 4. ຜະລິດຕະພັນໄມ້ອັດ.

ຜະລິດຕະພັນໄມ້ອັດປະກອບດ້ວຍ 07 ຊະນິດ ຄື: ໄມ້ອັດຈາກຂີ້ເລື່ອຍ ຫຼື ຂີ້ກົບ; ໄມ້ອັດຈາກເສດໄມ້ ບົດ; ໄມ້ອັດຈາກໄຍໄມ້; ໄມ້ອັດຈາກໄມ້ປອກ; ໄມ້ອັດບ໊ອກບອດ; ໄມ້ອັດປະສານ ຫຼື ໄມ້ອັດເຊື່ອມຕໍ່ປະສານ ແລະ ໄມ້ອັດປະສານສຳລັບໜ້າໂຕະ, ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມກ້ວາງ ແລະ ຄວາມຍາວ. ວັດຖຸດິບທີ່ນຳ ໃຊ້ ຕ້ອງແມ່ນໄມ້ປູກ ແລະ ໄມ້ທຳມະຊາດ (ໄມ້ຄຸ້ມຄອງ 1,2,3) ເທົ່ານັ້ນ.

4.1 **ຜະລິດຕະພັນໄມ້ອັດຈາກຂີ້ເລື່ອຍ, ຂີ້ກົບ** ແມ່ນຜະລິດຕະພັນໄມ້ຈາກການນຳເອົາຂີ້ເລື່ອຍ ຫຼື ຂີ້ກົບປະສົມ ໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍຄວາມຮ້ອນເພື່ອໃຫ້ຂີ້ເລື່ອຍ ແລະ ຂີ້ກົບເຊື່ອມເຂົ້າກັນໃຫ້ແຂງຕົວເປັນແຜ່ນເພື່ອນຳໃຊ້ຕໍ່ໄປ.

4.2 **ຜະລິດຕະພັນໄມ້ອັດຈາກໄມ້ບົດ** ແມ່ນຜະລິດຕະພັນໄມ້ທີ່ນຳໃຊ້ໄມ້ຄຸ້ມຄອງ 1,2,3 ຫຼື ໄມ້ປູກ (ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ ແລະ ໄມ້ຢາງພາລາ) ຫຼື ໄມ້ເສດຈາກໂຮງງານປຸງແຕ່ງໄມ້ ມາບົດ, ອົບ ຫຼັງຈາກນັ້ນນຳມາປະສົມໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍ ຄວາມຮ້ອນໃຫ້ເຊື່ອມຕົວເຂົ້າກັນໃຫ້ແຂງຕົວເປັນແຜ່ນ ເພື່ອນຳໃຊ້ຕໍ່ໄປ.

4.3 **ຜະລິຕະພັນໄມ້ອັດຈາກໄມ້ປອກ** ແມ່ນຜະລິດຕະພັນໄມ້ທີ່ນຳເອົາໄມ້ປອກ ຫຼື ໄມ້ຝານ ມາຕິດເຂົ້າກັນເປັນ ຊັ້ນ ແລ້ວອັດດ້ວຍເຄື່ອງຈັກໃຫ້ເປັນແຜ່ນດຽວ ຫຼື ອາດຈະນຳໃຊ້ໄມ້ປອກ ຕິດໃສ່ດ້ານໜ້າ ຫຼື ດ້ານຫຼັງ, ສ່ວນໃຈກາງອາດນຳໃຊ້ຂີ້ເລື່ອຍ ຫຼື ອື່ນໆ.

4.4 **ໄມ້ອັດປະສານ ຫຼື ໄມ້ອັດເຊື່ອມຕໍ່ປະສານ ແລະ ໄມ້ອັດປະສານສຳລັບໜ້າໂຕະ** ແມ່ນຜະລິດຕະພັນໄມ້ທີ່ນຳ ເອົາໄມ້ເປັນເສັ້ນ (ຄວາມກວ້າງບໍ່ເກີນ 15 ຊມ) ຫຼື ນຳເອົາໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນດ້ວຍ ກາວ ອັດໜີບເປັນເສັ້ນຍາວ ແລະ ເຊື່ອມຕໍ່ເຂົ້າກັນເປັນແຜ່ນ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຊອຍ, ຕັດຂະໜາດ, ອັດໜີບດ້ວຍເຄື່ອງຈັກອັດແຮງ, ກົບລຽບສີ່ໜ້າ ແລະ ຂັດ.

5. **ຜະລິດຕະພັນເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້**

ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ ປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ ເຊັ່ນ: ຂອບຮູບ, ຂອບແວ່ນ, ຫີບ, ລັງ, ຖັງ, ພາຖາດ, ເຄື່ອງມື, ແລະ ອື່ນໆ. ວັດຖຸດິບທີ່ນຳໃຊ້ ຕ້ອງແມ່ນໄມ້ປູກ ແລະ ໄມ້ທຳມະຊາດ (ໄມ້ຄຸ້ມຄອງ 1,2,3).

6. **ຜະລິດຕະພັນໄມ້ປະກອບໃນອາຄານ**

ຜະລິດຕະພັນໄມ້ປະກອບໃນອາຄານ ປະກອບດ້ວຍ 09 ຊະນິດ ຄື: ຊຸດປ່ອງຢ້ຽມ, ຊຸດປະຕູ, ແຜ່ນໄມ້ມຸງຫຼັງຄາ, ແຜ່ນໄມ້ຮື້ອ, ແຜ່ນໄມ້ປະກອບແບບລາຍໂມເສດ, ຜະລິດຕະພັນໄມ້ຂອບອັດເປັນຊັ້ນ; **ຜະລິດຕະພັນໄມ້ປີ້ວ;** ຊຸດຂັ້ນໄດ ແລະ **ຜະລິດຕະພັນໄມ້ລູກຕຶ່ງ,** ຊຶ່ງໄດ້ກຳນົດຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ.

ຜະລິດຕະພັນໄມ້ປະກອບໃນອາຄານ ຕ້ອງເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດປະກອບເຂົ້າ ແລະ ແຍກອອກຈາກກັນໄດ້ທັນທີ (Knock-down) ເພື່ອສະດວກໃນການຂົນສົ່ງ, ແຕ່ຕ້ອງຄົບເປັນຊຸດ ຫຼື ເປັນໜ່ວຍ ເຊັ່ນ: ຊຸດປ່ອງຢ້ຽມ, ຊຸດປະຕູ ແລະ ອື່ນໆ (ບໍ່ອະນຸຍາດໃຫ້ສົ່ງອອກເປັນຊິ້ນສ່ວນດຽວ).

6.1 **ຊຸດປະຕູ ແລະ ປ່ອງຢ້ຽມສຳເລັດຮູບ** ແມ່ນຜະລິດຕະພັນໄມ້ ທີ່ເຮັດດ້ວຍໄມ້ ແບບເສັ້ນດຽວ ຫຼື ອັດປະສານ ໂດຍຜ່ານຂະບວນການປຸງແຕ່ງເຊັ່ນ: ອົບ, ກົບລຽບລະອຽດ, ແລ່ນຮ່ອງບັງໃບ, ຕັດມຸມສາກຫົວວົງກົບ ຕົວຜູ້ ແລະ ຕົວແມ່ ທີ່ສາມາດປະກອບເປັນຊຸດ.

- ສຳລັບ ການສົ່ງອອກ ສາມາດສົ່ງອອກສະເພາະ ວົງກົບປະຕູ ແລະ ປ່ອງຢ້ຽມ ຫຼື ບານປະຕູ ແລະ ປ່ອງຢ້ຽມ ກໍ່ໄດ້.

6.2 **ໄມ້ມຸງຫຼັງຄາ ແລະ ໄມ້ຮື້ອ** ແມ່ນຜະລິດຕະພັນໄມ້ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ກົບລຽບ, ແລ່ນໂຣເຕີ ຫຼື ບໍ່ແລ່ນໂຣເຕີ ເພື່ອໃຫ້ເປັນຮູບຊົງທີ່ຕ້ອງການ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1,2,3.

6.3 **ແຜ່ນໄມ້ປະກອບແບບລາຍໂມເສດ** ແມ່ນການນຳເອົາແຜ່ນໄມ້, ໄມ້ນ້ອຍ, ໄມ້ສັ້ນ ມາຕິດເຂົ້າກັນດ້ວຍກາວ ແລ້ວໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ກົບລຽບ ເພື່ອໃຫ້ເປັນຮູບຊົງທີ່ຕ້ອງການ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ປະເພດໄມ້ຄຸ້ມຄອງ 1,2,3.

6.4 **ຜະລິດຕະພັນໄມ້ຂອບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ ມາຕິດເຂົ້າກັນດ້ວຍກາວ ເປັນຊັ້ນ, ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຊອຍ, ແລະ ຕັດຂະໜາດ, ກົບລຽບ, ຂັດ ແລະ ອັດເປັນຊັ້ນ ຕາມຂະໜາດທີ່ໄດ້ກຳນົດ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ປະເພດໄມ້ຄຸ້ມຄອງ 1,2,3.

6.5 ຜະລິດຕະພັນໄມ້ປີ້ວ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂັ້ນຕອນຂອງການປຸງແຕ່ງ ເຊັ່ນ: ອົບ, ກົບລຽບ, ຂັດ, ແລ່ນຫລິ້ມ ຫຼື ບໍ່ແລ່ນຫລິ້ມ, ແລ່ນໂຣເຕີ, ລົງສີ ຫຼື ບໍ່ລົງສີ ທີ່ມີຂະໜາດຄວາມໜາ ນ້ອຍກ່ວາ ຫຼື ເທົ່າກັບ 3 ຊມ, ຄວາມກວ້າງ ນ້ອຍກ່ວາ ຫຼື ເທົ່າກັບ 12 ຊມ ແລະ ຄວາມຍາວບໍ່ຈຳກັດ.

6.6 ແປ້ນຂັ້ນໄດຕົວນອນ ແລະ ຕົວຕັ້ງ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ກົບລຽບ, ລົບຫຼ່ຽມ, ຕັດຂະໜາດ, ຂັດ ຕາມຂະໜາດທີ່ໄດ້ກຳນົດ.

6.7 ລູກຕຶ່ງ ແມ່ນຜະລິດຕະພັນໄມ້ ທີ່ມີຮູບລັກສະນະຊົງກົມ ແລະ ຮູບຊົງຫລ່ຽມ ຕາມຂະໜາດທີ່ກຳນົດ.

- ລູກຕຶ່ງ ຮູບຊົງກົມ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ຊ່ຽນ ແລະ ຂັດ, ເສັ້ນຜ່າກາງຕ້ອງນ້ອຍກ່ວາ ຫຼື ເທົ່າກັບ **12 ຊມ** ແລະ ຄວາມສູງບໍ່ເກີນ **120 ຊມ.**
- ລູກຕຶ່ງ ຮູບຊົງຫຼ່ຽມ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ຊ່ຽນ, ແລ່ນໂຮເຕີ, ກົບລຽບ ແລະ ຂັດ, ຄວາມໜາ ແລະ ກ້ວາງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ **12 ຊມ, 12 ຊມ** ແລະ **120 ຊມ** ຕາມລຳດັບ.

7 ເຄື່ອງຫັດຖະກຳທີ່ເຮັດດ້ວຍໄມ້

ເຄື່ອງຫັດຖະກຳທີ່ເຮັດດ້ວຍໄມ້ ປະກອບດ້ວຍຫຼາຍຊະນິດ ແລະ ຫຼາຍຮູບແບບ ເຊັ່ນ: ເຄື່ອງໃຊ້ເທິງໂຕະອາຫານ, ເຮືອນຄົວ, ເຄື່ອງຫັດຖະກຳໄມ້, ເຄື່ອງດົນຕີ, ເຄື່ອງເອ້ຍ້ອງ ແລະ ອື່ນໆ.

- ຜະລິດຕະພັນ**ຂຽງໄມ້** ປະກອບດ້ວຍ 03 ປະເພດ ຫຼື ຮູບແບບ ເຊັ່ນ: **ຂຽງສີ່ຫລ່ຽມຍາວ, ຂຽງໜ້າມົນ ແລະ ຂຽງສີ່ຫລ່ຽມມົນທົບ** ຕ້ອງຜ່ານຂະບວນການປຸງແຕ່ງ ດ້ວຍການ ເລື່ອຍ, ກົບລຽບສີ່ດ້ານ ແລະ ຕັດຂະໜາດ ໃຫ້ໄດ້ຕາມການກຳນົດ (ຂຽງສີ່ຫລ່ຽມຍາວ **"≤5x≤30x≤50"**; ຂຽງໜ້າມົນ **"ໜ້າຕາງ ≤ 30, ຄວາມໜາ ≤ 5 ແລະ** ຂຽງສີ່ຫລ່ຽມມົນທົບ **≤ 5x≤30x≤30) ຊມ.**
- ເຄື່ອງຫັດຖະກຳໄມ້ ທີ່ຄວັດ-ແກະສະຫລັກ ໃນຮູບແບບຕ່າງໆ ເຊັ່ນ: ຮູບພຣະ, ຮູບຄົນ, ຮູບສັດ, ໂຖດອກໄມ້ ແລະ ອື່ນໆ ຕ້ອງຜ່ານຂະບວນການປຸງແຕ່ງດ້ວຍການ ຄວັດ-ແກະສະຫລັກ ໃຫ້ໄດ້ຫຼາຍກ່ວາ ຫຼື ເທົ່າກັບ 90% ຂອງເນື້ອໄມ້ ຂຶ້ນໄປ ແລະ ຕ້ອງມີນ້ຳໜັກ ນ້ອຍກ່ວາ ຫຼື ເທົ່າກັບ 20 ກິໂລກຼາມ ລົງມາ.
- **ແຜ່ນໄມ້ແກະສະຫລັກແປັນແຜ່ນດຽວ** ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ ຫຼື ຊອຍ, ຕັດຂະໜາດ, ຄວັດ-ແກະສະຫລັກ ໃນຮູບລັກສະນະຕ່າງໆ ແລ້ວຂັດ ແລະ ລົງສີ. ແຜ່ນໄມ້ແກະສະຫລັກ ຕ້ອງໃຫ້ມີຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ 5x30x200 ຊມ ລົງມາ, **ຕ້ອງຜ່ານການຄວັດ-ແກະສະຫລັກຫຼາຍກ່ວາ 90% ຂຶ້ນໄປ.** ກໍລະນີ ຕ້ອງການແຜ່ນໄມ້ແກະສະຫລັກ ທີ່ມີ ຄວາມກວ້າງ ແລະ ຄວາມຍາວ ເກີນຂະໜາດທີ່ກຳນົດຂ້າງເທິງນີ້ ແມ່ນສາມາດນຳໃຊ້ໄມ້ຫຼາຍແຜ່ນມາຕໍ່ເຂົ້າກັນໄດ້.
- **ໄມ້ກ້ານສໍ ແລະ ຜະລິດຕະພັນສໍ** ແມ່ນແຜ່ນໄມ້ ແລະ ຜະລິດຕະພັນໄມ້ ທີ່ມີລະຫັດເຄົ້າ ແລະ ລະຫັດຍ່ອຍ (44.08 "4408.90.00; 4408.90.90 & 4408.39" ໂດຍຜ່ານຂັ້ນຕອນຂອງການປຸງແຕ່ງຄື: ເລື່ອຍ , ປາດ, ຕັດຂະໜາດ ແລະ ອື່ນໆ ເພື່ອໃຫ້ໄດ້ ຕາມຮູບແບບ ແລະ ຂະໜາດທີ່ຕ້ອງການ ເຊັ່ນ: ຮູບແບບຕັດຂະໜາດສີ່ຫລ່ຽມຍາວ, ແລ່ນຮ່ອງ ຫຼື ບໍ່ແລ່ນຮ່ອງ ສຳລັບໃສ່ໄສ້ສໍ, ຕ້ອງໃຫ້ມີຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ **1x8x20** ຊມ ລົງມາ.

8 ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້

- ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ ແມ່ນຜະລິດຕະພັນໄມ້ສຳເລັດຮູບ ທີ່ປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດແຍກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down). ຜະລິດຕະພັນໄມ້ເຫຼົ່ານີ້ສາມາດສົ່ງອອກເປັນຊິ້ນສ່ວນ, ແຕ່ຕ້ອງຄົບເປັນຊຸດ ຫຼື ເປັນໜ່ວຍ ແລະ ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ ຫຼື ຊອຍ, ຕັດຂະໜາດ, ກົບລະອຽດ, ຂັດລະອຽດ, ເຈາະຮູ ແລະ ລົງສີ **ຫຼື ບໍ່ລົງສີ** ຕາມຮູບແບບຂອງແຕ່ລະຜະລິດຕະພັນໄມ້ ເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ ແລະ ອື່ນໆ. ໃນນີ້ **ບໍ່ອະນຸຍາດໃຫ້ສົ່ງອອກເປັນຊິ້ນສ່ວນດຽວ** ຄື: ຂາໂຕະຢ່າງດຽວ, ຂາຕຽງຢ່າງດຽວ ແລະ ອື່ນໆ. ຊະນິດໄມ້ທີ່ໃຊ້ ຕ້ອງແມ່ນ ໄມ້ປູກ ແລະ ໄມ້ຄຸ້ມຄອງ 1,2,3 ເທົ່ານັ້ນຈຶ່ງອະນຸຍາດໃຫ້ສົ່ງອອກ.

- **ຜະລິດຕະພັນໂຕະໜ້າມົນໄມ້ແຜ່ນດຽວ** ຕ້ອງມີຂະໜາດເສັ້ນຜ່າໃຈກາງ ນ້ອຍກ່ວາ ຫຼື ເທົ່າກັບ 120 ຊມ,

ຄວາມໜາ ນ້ອຍກ່ວາ ຫຼື ເທົ່າກັບ 5 ຊມ.

- ບໍ່ອະນຸຍາດໃຫ້ສົ່ງອອກ ເຟີນີເຈີໄມ້ ທີ່ນຳໃຊ້ຊິ້ນສ່ວນໄມ້ຂະໜາດໃຫຍ່ ແລະ ຫ້າມສົ່ງອອກເຟີນີເຈີໄມ້ທຳມະຊາດແຜ່ນດຽວຂະໜາດໃຫຍ່ (ເຟີນີເຈີ ທີ່ອະນຸຍາດໃຫ້ສົ່ງອອກ ລາຍລະອຽດ ດັ່ງຮູບປະກອບ ຂັດຕິດ).

## II. ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປູກ" ເພື່ອສົ່ງອອກ.

ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປູກ" ເພື່ອສົ່ງອອກ (ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ) ແມ່ນຜະລິດຕະພັນໄມ້ ຕາມການກຳນົດໃນເອກະສານຊ້ອນທ້າຍ 02, ຊຶ່ງປະກອບດ້ວຍ 07 ລາຍການ ຫຼື ປະເພດ, ແຕ່ລະປະເພດປະກອບດ້ວຍຫຼາຍຊະນິດ ແລະ ຮູບແບບ ທີ່ມີການກຳນົດຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ຢ່າງຈະແຈ້ງ.

**1. ຜະລິດຕະພັນຖ່ານໄມ້**

ຜະລິດຕະພັນຖ່ານໄມ້ປະກອບດ້ວຍ 01 ປະເພດ ຄື:

1.1 **ຖ່ານໄມ້ທຸກຂະໜາດ** ແມ່ນຜະລິດຕະພັນຖ່ານ ທີ່ຜະລິດຈາກໄມ້ປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນສວນປູກ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນກ່ຽວຂ້ອງເທົ່ານັ້ນ.

**2. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮື້ວ (ໄມ້ກົມ), ໄມ້ເລື່ອຍເປັນແຜ່ນ**

2.1 **ໄມ້ຄ້ຳແບບ, ໄມ້ຮື້ວ ແລະ ໄມ້ຂ້າວ** ທີ່ເປັນລຳຕົ້ນ (ໄມ້ກົມ) ແມ່ນໄມ້ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນເທພາ, ໄມ້ກະຖິນນາລົງ ແລະ ໄມ້ຢາງພາລາ, ຕ້ອງມີເສັ້ນຜ່າສູນກາງ ນ້ອຍກວ່າ ຫຼື ເທົ່າກັບ 12 ຊມ ລົງມາ.

2.2 **ໄມ້ເລື່ອຍເປັນແຜ່ນ** ແມ່ນຜະລິດຕະພັນໄມ້ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນສວນປູກ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນກ່ຽວຂ້ອງ, ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ ຫຼື ຊອຍ ເປັນແຜ່ນ/ ເປັນເສັ້ນ, ຕັດໃຫ້ໄດ້ຕາມຂະໜາດ ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ 5 x15x200 ຊມ ລົງມາ.

**3. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ)**

ໄມ້ເກດສະໜາ ທີ່ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ ແມ່ນຜະລິດຕະພັນໄມ້ຈາກສວນປູກ ທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນກ່ຽວຂ້ອງ, ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ ຈາກໂຮງງານປຸງແຕ່ງໄມ້ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບການ.

**4. ຜະລິດຕະພັນເຫຍື່ອໄມ້**

ເຫຍື່ອໄມ້ ແມ່ນຜະລິດຕະພັນໄມ້ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນກ່ຽວຂ້ອງ, ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ຕັດ/ເລື່ອຍ, ບົດ, ຕົ້ມ, ກັ່ນ, ສະກັດ ຈົນໃຫ້ໄດ້ເຫຍື່ອໄມ້ລະອຽດ.

**5. ຜະລິດຕະພັນໄມ້ປອກ ແລະ ໄມ້ຝານ**

ຜະລິດຕະພັນໄມ້ປອກ, ໄມ້ຝານ ແມ່ນຜະລິດຕະພັນໄມ້ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນກ່ຽວຂ້ອງ, ຜ່ານຂະບວນການປອກ ຫຼື ຝານ ໄມ້ທ່ອນ ໃຫ້ໄດ້ຕາມຂະໜາດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ 0.6x150x300 ຊມ ລົງມາ.

6. ຜະລິດຕະພັນໄມ້ປູພື້ນ S4S

ຜະລິດຕະພັນໄມ້ປູພື້ນ (S4S Flooring) ແມ່ນຜະລິດຕະພັນໄມ້ ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນທີ່ກ່ຽວຂ້ອງ, ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ, ຕັດຂະໜາດ, ກົບລຽບ ເພື່ອໃຫ້ໄດ້ຕາມຂະໜາດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ 5x20x600 ຊມ ລົງມາ.

7. ຜະລິດຕະພັນໄມ້ພາເລດ

ຜະລິດຕະພັນໄມ້ພາເລດ ແມ່ນຜະລິດຕະພັນໄມ້ ຈາກສວນປູກ ເຊັ່ນ: ໄມ້ວິກ, ໄມ້ກະ ຖິນນາລົງ, ໄມ້ກະຖິນເທພາ ແລະ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດໃຫ້ຂຸດຄົ້ນຈາກພາກສ່ວນທີ່ກ່ຽວຂ້ອງ, ຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ, ຕັດຂະໜາດ ເພື່ອໃຫ້ໄດ້ຕາມຂະໜາດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ນ້ອຍກ່ວາ ຫຼື ເທົ່າກັບ 5 x15 x200 ຊມ ລົງມາ.

*<u>ໝາຍເຫດ:</u> ຜະລິດຕະພັນໄມ້ປູກ ອື່ນໆ ລວມທັງໄມ້ສັກ ທີ່ບໍ່ນອນໃນເອກະສານຊ້ອນທ້າຍ 02 ນີ້, ຖ້າຫາກວ່າມີການປຸງແຕ່ງ ຕາມຮູບແບບ, ຄຸນລັກສະນະ ທີ່ກໍານົດ ໃນລາຍການ (ບັນຊີ) ຜະລິດຕະພັນໄມ້ (ໄມ້ທໍາມະຊາດ) ເພື່ອສົ່ງອອກ ໃນເອກະສານຊ້ອນທ້າຍ 01 ຂອງຂໍ້ຕົກລົງສະບັບນີ້ ແມ່ນອະນຸຍາດໃຫ້ສົ່ງອອກໄດ້.*

## III. ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປ່ອງ ແລະ ຫວາຍ" ເພື່ອສົ່ງອອກ.

ລາຍການ (ບັນຊີ) ຜະລິດຕະພັນ "ໄມ້ປ່ອງ ແລະ ຫວາຍ" ແມ່ນຜະລິດຕະພັນໄມ້ປ່ອງ ແລະ ຫວາຍ ຕາມການກໍານົດໃນເອກະສານຊ້ອນທ້າຍ 03, ຊຶ່ງມີລາຍລະອຽດ ຄື:

- ຜະລິດຕະພັນໄມ້ປ່ອງ ແມ່ນຜະລິດຕະພັນສໍາເລັດຮູບ ຫຼື ຜະລິດຕະພັນເຄິ່ງສໍາເລັດຮູບ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ຜ່າເປັນຄິ້ວ, ເປັນປ່ຽງ, ເຫຼົາເປັນຮູບຊົງກົມ, ອັດເຊື່ອມຕໍ່ປະສານ ແລະ ອື່ນໆ.
- ຜະລິດຕະພັນຈາກຫວາຍ ຕ້ອງເປັນຜະລິດຕະພັນສໍາເລັດຮູບ ແລະ ນໍາໃຊ້ໄດ້ເລີຍເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ ແລະ ອື່ນໆ.

## IV. ຮູບພາບປະກອບ

ນອກຈາກຄໍາອະທິບາຍເນື້ອໃນ ຂອງລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ຂ້າງເທິງນີ້ແລ້ວຍັງມີຮູບພາບປະກອບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ເພາະວ່າ ບາງຊະນິດ ແລະ ຮູບແບບຜະລິດຕະພັນໄມ້ ມີຄວາມຫຍຸ້ງຍາກໃນການອະທິບາຍ ຫຼື ໃຫ້ຄວາມໝາຍ ຈຶ່ງໃຫ້ເບິ່ງຮູບພາບປະກອບ ຕາມເອກະສານຊ້ອນທ້າຍ 01, ເອກະສານຊ້ອນທ້າຍ 02 ແລະ ເອກະສານຊ້ອນທ້າຍ 03 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ (ສະບັບປັບປຸງ) ຂອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ, ເລກທີ 0002/ອຄ, ວັນທີ 03 ມັງກອນ 2018.

ຜະລິດຕະພັນ ໄມ້ທໍາມະຊາດ, ໄມ້ປູກ, ໄມ້ປ່ອງ ແລະ ຫວາຍ ອື່ນໆ ທີ່ແຕກຕ່າງຈາກການກໍານົດ ໃນຂໍ້ຕົກລົງສະບັບນີ້ ແມ່ນຫ້າມສົ່ງອອກເດັດຂາດ.

ຫົວໜ້າກົມ

ມະໂນຮັກ ຣາຊະຈັກ